# ນະໂຍບາຍຕໍ່ຕ້ານການສໍ້ລາດບັງຫຼວງ

## 1. ການປ້ອງກັນການສໍ້ໂກງ ແລະ ການສໍ້ລາດບັງຫຼວງ

AIPP ມີນິຕິກຳເປັນຂອງຕົນເອງ, ມີກົດລະບຽບ ແລະ ຄ່ານິຍົມຫຼັກ, ຊຶ່ງເປັນພື້ນຖານສຳຄັນສຳລັບນະໂຍບາຍຕໍ່ຕ້ານການສໍ້ລາດບັງຫຼວງສະບັບນີ້. ນະໂຍບາຍສະບັບນີ້ ສະແດງເຖິງການຍອມຮັບ ແລະ ບໍ່ຍອມຮັບຂອງພະນັກງານ ແລະ ເຈົ້າໜ້າທີ່ຂອງ AIPP, ເຊັ່ນດຽວກັນ ອົງການທີ່ເປັນສະມາຊິກ ແລະ ຄູ່ຮ່ວມງານ ທີ່ໄດ້ຮັບການສະໜັບສະໜູນຈາກ AIPP ເພື່ອໃຫ້ສອດຄ່ອງກັບກົດໝາຍຕໍ່ຕ້ານການສໍ້ລາດບັງຫຼວງ. ທັງໝົດນີ້ ລວມທັງກົດໝາຍພາຍໃນປະເທດ ແລະ ກົດໝາຍສາກົນ ຫ້າມໃຊ້ຈ່າຍໃນຮູບແບບທີ່ບໍ່ເໝາະສົມ ເຊັ່ນ ຂອງຂວັນ ຫຼື ສິ່ງຈູງໃຈອື່ນໆ ແລະ ໄດ້ຮັບຈາກບຸກຄົນໃດໜຶ່ງ, ອົງການຈັດຕັ້ງໃດໜຶ່ງ ລວມທັ້ງພາກລັດ ແລະ ພາກເອກະຊົນ. ນະໂຍບາຍສະບັບນີ້ ຍັງສາມາດໃຊ້ໄດ້ໃນຂະນະທີ່ເຮັດວຽກຮ່ວມກັບພາກລັດ ແລະ ອົງການຈັດຕັ້ງອື່ນໆ. ນະໂຍບາຍສະບັບນີ້ສາມາດທົບທວນໄດ້ພາຍໃຕ້ຄວາມເຫັນດີ ແລະ ຄວາມຕ້ອງການຂອງຄະນະກຳມະການບໍລິຫານ (EC) ແລະ/ຫຼື ສຽງສ່ວນຫຼາຍຂອງສະມາຊິກໃຫ້ມີຄວາມສອດຄ່ອງ ແລະ ເໝາະສົມຫຼາຍຂຶ້ນ ເພື່ອນຳມາປັບປຸງ/ປ່ຽນແປງຄວາມຮັບຜິດຊອບພາຍໃນ ແລະ ພາຍນອກ AIPP. ສະມາຊິກທັງໝົດ, ຄູ່ຮ່ວມງານ ແລະ ພະນັກງານທຸກຄົນ ຈະຕ້ອງໄດ້ປະຕິບັດຕາມນະໂຍບາຍສະບັບນີ້.

### 1.1. ນະໂຍບາຍຕໍ່ຕ້ານການສໍ້ລາດບັງຫຼວງໃນ AIPP

ນະໂຍບາຍຕໍ່ຕ້ານການສໍ້ຫຼາດບັງຫຼວງ ເປັນພາກສ່ວນໜຶ່ງສຳຄັນຂອງລະບົບການບໍລິຫານໂດຍລວມຂອງ AIPP.

#### 1.1.1. ຈຸດປະສົງຂອງນະໂຍບາຍ

ຈຸດປະສົງຫຼັກຂອງນະໂຍບາຍສະບັບນີ້ ແມ່ນເພື່ອສົ່ງເສີມ ແລະ ສ້າງມາດຕາການເພື່ອຮັບປະກັນຄວາມຮັບຜິດຊອບ ແລະ ຄວາມໂປ່ງໃສ ໃນການຈັດຕັ້ງການປະຕິບັດການຕໍ່ຕ້ານການສໍ້ລາດບັງຫຼວງ ທີ່ມີປະສິດທິພາບ ແລະ ປະສິດທິຜົນ ຢູ່ໃນອົງການຂອງ AIPP ໃຫ້ສອດຄ່ອງກັບນະໂຍບາຍ ແລະ ກົດໝາຍວ່າດ້ວຍ ການສໍ້ລາດບັງຫຼວງ ຂອງປະເທດ ແລະ ສາກົນ.

#### 1.1.2. ນິຍາມ ແລະ ຂອບເຂດ

ນິຍາມຂອງການຕ້ານການສໍ້ລາດບັງຫຼວງໃນເອກະສານສະບັບນີ້ແມ່ນອີງຕາມການນຳໃຊ້ທົ່ວໄປຂອງສະຖາບັນການເງິນສາກົນ.

- "ການກະທຳທີ່ເປັນການໃຫ້ສິນບົນ" ໝາຍເຖິງການສະເໜີອັນໃດອັນໜຶ່ງ, ການໃຫ້, ການຮັບ ຫຼື ການຊັກຊວນ ທາງກົງ ຫຼື ທາງອ້ອມ ຂອງທຸກສິ່ງຢ່າງທີ່ມີຄ່າ ຊຶ່ງມີອິດທິພົນຕໍ່ການປະຕິບັດໜ້າທີ່ ຫຼື ການຕັດສິນໃຈຂອງບຸກຄົນອື່ນທີ່ຈະໄດ້ຮັບ ແລະ ເປັນຜົນປະໂຫຍດສ່ວນຕົວ, ສິ່ງທີ່ມີມູນຄ່າເຫຼົ່ານັ້ນລວມເຖິງເງິນສົດ, ຂອງຂວັນ ແລະ ການໃຫ້ໂດຍອັດທະຍະໃສອື່ນໆ.

- "ການກະທຳທີ່ເປັນການສໍ້ລາດບັງຫຼວງ" ໝາຍເຖິງ ການສວຍໃຊ້ອຳນາດທີ່ຮັບມອບໝາຍຈາກຂັ້ນເທິງເພື່ອຜົນປະໂຫຍດສ່ວນຕົວ ແລະ ຜົນປະໂຫຍດທາງດ້ານການເງິນ ໃນການໃຫ້ບໍລິການທັງພາກລັດ ແລະ ເອກະຊົນ ລວມທັງທຸລະກິດ ທຳລາຍການປົກຄອງທີ່ດີ ແລະ ລະບົບການປົກຄອງດ້ວຍກົດໝາຍ.
- "ການກະທຳທີ່ເປັນການໃຊ້ຈ່າຍເພື່ອອຳນວຍຄວາມສະດວກ" ໝາຍເຖິງ ເງິນໜ້ອຍຈຳນວນເພື່ອຈ່າຍໃຫ້ພະນັກງານພາກລັດ ຫຼື ພາກສ່ວນອື່ນໆ ທີ່ໃຫ້ຄວາມສະດວກໃນການເລັ່ງການດຳເນີນງານ ຫຼື ຊອກຫາວິທີທາງທີ່ງ່າຍ ແລະ ວ່ອງໄວ.
- "ການກະທຳທີ່ເປັນການສໍ້ໂກງ" ໝາຍເຖິງ ການກະທຳທີ່ຕັ້ງໃຈຈະຫຼອກລວງບຸກຄົນອື່ນທີ່ບໍ່ຖືກຕ້ອງ ແລະ ຫວັງຜົນປະໂຫຍດທາງດ້ານການເງິນ ຫຼື ອື່ນໆ ໃຫ້ແກ່ຕົນເອງ ເພື່ອຫຼີກລ້ຽງການເປັນພັນທະອື່ນໆ.
- "ການກະທຳທີ່ເປັນການສົມຮູ້ຮ່ວມຄິດ" ໝາຍເຖິງການຕົກລົງທີ່ເປັນຄວາມລັບ/ການຈັດການລະຫວ່າງສອງ ຫຼື ຫຼາຍກວ່ານັ້ນ ແຕ່ບຸກຄົນທີ່ສາມບໍ່ມີຄວາມຮູ້ໃນດ້ານນັ້ນ ຊຶ່ງຕົນເອງເປັນຜູ້ອອກແບບ ຫຼື ແນວຄວາມຄິດທີ່ບໍ່ຖືກຕ້ອງໃຫ້ບຸກຄົນທີ່ສາມເປັນຜູ້ກະທຳໃນສິ່ງນັ້ນ.
- "ການກະທຳທີ່ເປັນການບັງຄັບ" ໝາຍເຖິງ ການເຮັດໃຫ້ມີຄວາມເຊື່ອມເສຍ ຫຼື ທຳຮ້າຍ ຫຼື ນາບຄູ່ວ່າ ຈະເຮັດໃຫ້ເກີດມີຄວາມເສຍຫາຍໂດຍກົງ ຫຼື ທາງອ້ອມ ຕໍ່ບຸກຄົນອື່ນ ຫຼື ຊັບສິນຂອງພວກເຂົາ ຫຼື ບຸກຄົນທີ່ກ່ຽວຂ້ອງຢ່າງໃກ້ຊິດກັບພວກເຂົາ ໂດຍໃຊ້ອິດທິພົນທີ່ບໍ່ເໝາະສົມຕໍ່ກຸ່ມຄົນເຫຼົ່ານັ້ນ.
- "ການແກ້ແຄ້ນ" ໝາຍເຖິງ ການກະທຳທີ່ດຳເນີນການກັບພະນັກງານຂອງ AIPP ຫຼື ໜ່ວຍງານອື່ນໆ ທີ່ມີການເປີດເຜີຍການການລະເມີດຂອງເຂົາເຈົ້າ ຫຼື ບໍ່ປະຕິບັດຕາມລະບຽບການຂອງ AIPP ໂດຍບຸກຄົນ ຫຼື ນິຕິບຸກຄົນ/ໜ່ວຍງານໃດໜຶ່ງ.
- **"ການເປີດເຜີຍຄວາມລັບ"** ໝາຍເຖິງ ພະນັກງານຂອງ AIPP ຫຼື ບຸກຄົນທີ່ສາມ ທີ່ເປີດເຜີຍການສໍ້ລາດບັງຫຼວງຂອງບຸກຄົນໃດໜຶ່ງໃນກິດຈະກຳ/ໂຄງການ/ແຜນງານ ຂອງ AIPP ໂດຍການລາຍງານ ທັງລະບຸຊື່ ຫຼື ເປີດເຜີຍໃຫ້ຜູ້ທີ່ມີອຳນາດຂອງ AIPP.
- **"ການປົກປ້ອງການເປີດເຜີຍຄວາມລັບ"** ໝາຍເຖິງ ມາດຕາການເພື່ອຮັບປະກັນວ່າ ບຸກຄົນທີ່ເປີດເຜີຍການສໍ້ໂກງ ແລະ ການສໍ້ລາດບັງຫຼວງຢູ່ໃນ AIPP ແລະ ຄູ່ຮ່ວມງານ ຈະໄດ້ຮັບຄຸ້ມຄອງເປັນຢ່າງດີບໍ່ໃຫ້ໄດ້ຮັບຄວາມເດືອດຮ້ອນຈາກການແກ້ແຄ້ນຂອງບຸກຄົນທີ່ກະທຳຜິດ.

ຂອບເຂດຂອງນະໂຍບາຍສະບັບນີ້ ບໍ່ໄດ້ກວມເອົາການປະພຶດດ້ານຈັນຍາບັນ ຫຼື ພະນັກງານຜູ້ທີ່ມາຮັບໜ້າທີ່ແທນ ແລະ ທີ່ປຶກສາ ທີ່ບໍ່ໄດ້ຢູ່ໃນຂອບເຂດຂອງການສໍ້ລາດບັງຫຼວງ, ການສໍ້ໂກງ, ສົມຮູ້ຮ່ວມຄິດ ຫຼື

ບີບບັງຄັບ ຕາມທີ່ກຳນົດໄວ້ໃນເບື້ອງຕົ້ນ (ຕົວຢ່າງ: ການລ່ວງລະເມີດ, ການຄຸ້ມຄອງບໍ່ດີ, ພຶດຕິກຳທີ່ບໍ່ສຸພາບ ແລະ ການລະເມີດຕໍ່ກົດໝາຍ ແລະ ສັນຍາທີ່ກ່ຽວຂ້ອງກັບການສໍ້ໂກງ, ການສໍ້ລາດບັງຫຼວງ, ການສົມຮູ້ຮ່ວມຄິດ ຫຼື ການບັງຄັບ). ນະໂຍບາຍອື່ນໆ ແລະ ການຈັດຕັ້ງປະຕິບັດຂອງ AIPP ຍັງມີຜົນບັງຄັບໃຊ້ໃນການຈັດການກັບພະນັກງານທີ່ຮັບໜ້າທີ່ແທນຊຶ່ງມີການລົງໂທດຢ່າງເໝາະສົມ ຫຼື ຫາທາງແກ້ໄຂທີ່ເປັນທຳ.

## 1.2. ພະນັກງານ AIPP , ສ່ວນບຸກຄົນ ແລະ ຄູ່ຮ່ວມງານທີ່ເປັນໂຄງການ/ກິດຈະກຳ

AIPP ຈະໃຊ້ນະໂຍບາຍຂັ້ນເດັດຂາດ ທີ່ກຳນົດໄວ້ເພື່ອພິຈາລະນາໂດຍຜ່ານຂະບວນການສືບສວນ-ສອບສວນ ພະນັກງານ, ທີ່ປຶກສາຂອງຕົນ ຫຼື ຄູ່ຮ່ວມງານໃນໂຄງການອື່ນໆ ທີ່ມີສ່ວນຮ່ວມໃນການສໍ້ໂກງ, ການສໍ້ລາດບັງຫຼວງ, ການສົມຮູ້ຮ່ວມຄິດ ຫຼື ບີບບັງຄັບ. "***ຂັ້ນເດັດຂາດ***" ໝາຍເຖິງ AIPP ຈະດຳເນີນການຕາມຂໍ້ກ່າວຫາທັງໝົດຢູ່ພາຍໃຕ້ຂອບເຂດຂອງນະໂຍບາຍສະບັບນີ້ ແລະ ລົງໂທດຢ່າງເໝາະສົມ ຕາມຄວາມຈິງທີ່ໄດ້ຮັບຈາກການພິສູດຂໍ້ກ່າວຫາ. AIPP ຈະບັງຄັບໃຊ້ຕາມຂໍ້ກຳນົດທີ່ມີຢູ່ໃນມາດຕາການ ຊຶ່ງຈະໄດ້ປະຕິບັດຕາມວິໄນ ແລະ ລົງໂທດ ສຳລັບທຸກກໍລະນີໃຫ້ສອດຄ່ອງກັບກົດລະບຽບທີ່ບັງຄັບໃຊ້ຂອງ AIPP ແລະ ຂໍ້ກຳນົດທີ່ໄດ້ລະບຸໃນສັນຍາ. ມາດຕາການດັ່ງກ່າວຈະລວມເອົາການສົ່ງຜູ້ຕ້ອງຫາໄປຫາອຳນາດການປົກຄອງຂອງລັດທີ່ມີຄວາມສາມາດ ແລະ ຮັບປະກັນຕໍ່ການລົງໂທດ. ໃນກໍລະນີ ບຸກຄົນທີ່ເປັນຜູ້ຕ້ອງຫາຫາກຖືກວ່າຈ້າງໂດຍບຸກຄົນອື່ນ, AIPP ຈະໃຊ້ຂັ້ນຕອນທັງໝົດທີ່ມີຄວາມເປັນໄປໄດ້ເພື່ອຮັບປະກັນວ່າບຸກຄົນນັ້ນມີຄວາມຜິດໃນສະຖານໃດ ແລະ ຈະໃຊ້ວິທີການດຳເນີນງານທີ່ເໝາະສົມ, ຍຸຕິທຳສອດຄ່ອງກັບນະໂຍບາຍສະບັບນີ້. AIPP ຈະສືບຕໍ່ປັບປຸງການຄຸ້ມຄອງພາຍໃນເພື່ອຮັບປະກັນວ່າມັນມີປະສິດທິພາບໃນການການປ້ອງກັນ, ກວດກາ ແລະ ການສືບສວນ-ສອບສວນການສໍ້ໂກງ, ການສໍ້ລາດບັງຫຼວງ, ການສົມຮູ້ຮ່ວມຄິດ ຫຼື ການບີບບັງຄັບ ທີ່ກ່ຽວຂ້ອງກັບພະນັກງານຂອງຕົນ, ທີ່ປຶກສາ ຫຼື ຄູ່ຮ່ວມງານໃນໂຄງການ/ກິດຈະກຳ ແລະ ໃຊ້ຮ່ວມກັບພາກລັດ. ມັນຈະນຳໃຊ້ແນວທາງທີ່ມີຄວາມເປັນໄປໄດ້ເພື່ອປ້ອງກັນບຸກຄົນ ແລະ ໜ່ວຍງານທີ່ລາຍງານການສໍ້ລາດບັງຫຼວງ ຊຶ່ງຈະໄດ້ຮັບຜົນກະທົບທີ່ບໍ່ຍຸຕິທຳ ແລະ ອັນຕະລາຍຈາກບຸກຄົນທີ່ກະທຳຜິດດັ່ງກ່າວ.

### 1.3. ການປ້ອງກັນ ແລະ ການກວດສອບ

ໃນກອບຂອງລະບົບການເຮັດວຽກຄຸ້ມຄອງພາຍໃນອົງການຈັດຕັ້ງເປັນໝາກຫົວໃຈຫຼັກໃນການຕໍ່ຕ້ານການສໍ້ໂກງ ແລະ ການສໍ້ລາດບັງຫຼວງ ຢູ່ໃນການຈັດຕັ້ງປະຕິບັດວຽກງານຂອງຕົນ. ໃນເລື່ອງນີ້ ການຄວບຄຸມຂະບວນການຂອງ AIPP ແມ່ນເພື່ອປົກປ້ອງ ແລະ ກວດກາສິ່ງທີ່ຜິດປົກກະຕິຂອງການປະຕິບັດວຽກງານທີ່ມີການພັດທະນາຢ່າງບໍ່ຢຸດຢັ້ງ ເພື່ອໃຫ້ສອດຄ່ອງກັບຮູບແບບການດຳເນີນງານຂອງການປ່ຽນແປງ ແລະ ຍົກລະດັບ. ການຂະຫຍາຍຕົວທີ່ເພີ່ມຂຶ້ນຂອງໂຄງການທີ່ມີການຮ່ວມມືລະຫວ່າງ AIPP ກັບຄູ່ຮ່ວມງານ ແລະ ເຄືອຂ່າຍ, ມັນໄດ້ຂະຫຍາຍສາຂາ ແລະ ການຈ້າງທີ່ປຶກສາ ແມ່ນມີການພັດທະນາຫຼາຍຂຶ້ນ ແລະ ໃນປີຜ່ານມາໄດ້ມີການເສີມສ້າງຄວາມເຂັ້ມແຂງໃນຂະບວນການຄຸ້ມຄອງຫຼາຍຄັ້ງ.

ກົດລະບຽບ ແລະ ຂໍ້ບັງຄັບຂອງ AIPP, ນໍາໃຊ້ເຄື່ອງມືທາງດ້ານກົດໝາຍ ແລະ ຂະບວນການຄວບຄຸມ (ລວມທັງການກວດກາພາຍໃນ, ການດຸນດ່ຽງຂອງການຄຸ້ມຄອງການເງິນ ແລະ ການກວດສອບຈາກພາຍນອກ) ການກໍານົດ ແລະ ການບັງຄັບໃຊ້ຕົວກໍານົດຂອງການປະຕິບັດທີ່ເໝາະສົມຕໍ່ກັບພະນັກງານ, ທີ່ປຶກສາ ແລະ ຄູ່ຮ່ວມງານຂອງໂຄງການ, ແລະ ເປັນການປ້ອງກັນ ແລະ ກວດກາອຸປະຕິເຫດທີ່ເກີດຈາກການສໍ້ໂກງ ແລະ ການສໍ້ລາດບັງຫຼວງ. ກອບຂອງການປ້ອງກັນ ແລະ ການກວດກາໃນປະຈຸບັນຍັງມີລັກສະນະກວມລວມ ເພາະມັນເປັນການລິເລີ່ມໃນຊຸມປີຜ່ານມາ. ຄວາມຄືບໜ້າຂອງການລິເລີ່ມຢູ່ໃນປີ 2013 ຂອງລະບົບການຈັດການບໍລິຫານ, ມີການປັບປຸງນະໂຍບາຍການຊີ້ນໍາພະນັກງານ ແລະ ຂັ້ນຕອນການເຮັດວຽກທີ່ມີລັກສະນະສ້າງສັນຫຼາຍຂຶ້ນ ແລະ ມີຄວາມຮັບຜິດຊອບທາງຈັນຍາບັນຜ່ານການຈັດຕັ້ງປະຕິບັດຕາມຄວາມສາມາດ. ການປະເມີນຜົນການປັບປຸງປະສິດທິພາບຂອງການເຮັດວຽກ, ການຝຶກອົບຮົມ, ການສ້າງຄວາມສາມາດ ແລະ ການຄຸ້ມຄອງຊັບພະຍາກອນມະນຸດດີຂຶ້ນ ແລະ AIPP ໄດ້ກໍານົດການຈັດຕັ້ງປະຕິບັດຢ່າງຈະແຈ້ງ ຊຶ່ງມີຂອບເຂດທີ່ຍອມຮັບຂອງພຶດຕິກໍາທາງດ້ານຈັນຍາບັນຂອງພະນັກງານ AIPP. ສິ່ງເຫຼົ່ານີ້ ເປັນອົງປະກອບທັງໝົດຂອງປຶ້ມຄູ່ມືການຈັດຕັ້ງປະຕິບັດ ສະບັບປັບປຸງຂອງເລຂາທິການຂອງ AIPP ຢູ່ໃນພາກພື້ນໃນປີ 2013. ການທົບທວນນະໂຍບາຍການຄຸ້ມຄອງທັງດ້ານການເງິນ, ແນວທາງການຈັດຕັ້ງປະຕິບັດ ແລະ ຄູ່ມືການຝຶກອົບຮົມສໍາລັບພະນັກງານ AIPP ແລະ ຄູ່ຮ່ວມງານໃນໂຄງການຕ່າງໆ ກັບການສ້າງຄວາມສາມາດໃນການຄຸ້ມຄອງການເງິນໄດ້ຮັບການປັບປຸງດີຂຶ້ນ ພາໃຫ້ມີຄວາມໂປ່ງໃສຫຼາຍຂຶ້ນ ແລະ ສາມາດເຂົ້າເຖິງຂໍ້ມູນຂ່າວສານການເຄື່ອນໄຫວທາງດ້ານການເງິນຢ່າງສະດວກ ແລະ ລະບົບການເງິນ ແລະ ການຈັດຊື້ຕ່າງໆ ກໍ່ມີປະສິດທິພາບດີກວ່າເກົ່າ. ນອກຈາກນັ້ນ, AIPP ຍັງໄດ້ນໍາສະເໜີກອບການບໍລິຫານຊັບສິນ ແລະ ໜີ້ສິນ ທີ່ກ່ຽວຂ້ອງກັບການນໍາໃຊ້ຜິດປະເພດ, ຊຶ່ງພາໃຫ້ມີຄວາມເສຍຫາຍເກີດຂຶ້ນ ຫຼື ເຮັດໃຫ້ຊັບສິນສູນເສຍໂດຍພະນັກງານໃດໜຶ່ງ.

## 1.4. ຂັ້ນຕອນຕໍ່ໄປ

ສັງຄົມ ແລະ ອົງການຈັດຕັ້ງໃດ ກໍ່ມີຄວາມສ່ຽງຕໍ່ກັບການສໍ້ລາດບັງຫຼວງ ເຖິງແມ່ນວ່າ ຈະມີການກວດສອບ ແລະ ຕິດຕາມຍອດເງິນໃນລະບົບທີ່ໄດ້ສ້າງຕັ້ງຂຶ້ນກໍ່ຕາມ, ການສໍ້ລາດບັງຫຼວງ ແມ່ນເກີດຂຶ້ນໄດ້ຢູ່ທຸກໆບ່ອນ ຖ້າຫາກບໍ່ມີມາດຕາການກວດສອບທີ່ເຂັ້ມງວດ ແລະ ມີປະສິດທິພາບ. ເຖິງວ່າຈະມີການປັບປຸງໃນໄລຍະຜ່ານມາກໍ່ຕາມ, ແຕ່ AIPP ຍັງເຊື່ອວ່າ ວິວັດທະນາການໃນການພັດທະນາມາດຕາການໃນການຄຸ້ມຄອງ ແລະ ຕໍ່ຕ້ານການສໍ້ລາດບັງຫຼວງ ຍັງມີຄວາມຈໍາເປັນໃນຕໍ່ໜ້າ ເພື່ອຮັບປະກັນວ່າ ການກວດສອບມີປະສິດທິພາບ ແລະ ຄວາມດຸ່ນດ່ຽງເປັນໄປຕາມນະໂຍບາຍຂັ້ນເດັດຂາດ. ນີ້ເປັນການເຊື່ອມນະໂຍບາຍເຫຼົ່ານີ້ເຂົ້າໄປໃນເອກະສານທາງດ້ານນິຕິກໍາ ແລະ ລະບຽບການ (ທີ່ບໍ່ໄດ້ສະທ້ອນໃຫ້ເຫັນ), ສ້າງຂໍ້ແນະນໍາທີ່ເໝາະສົມໃຫ້ແກ່ພະນັກງານ, ສະມາຊິກ ແລະ ຄູ່ຮ່ວມງານຂອງ AIPP. ການກໍານົດເວລາ ແລະ ຄວາມສອດຄ່ອງ ມີຄວາມສໍາຄັນສໍາລັບການຈັດຕັ້ງປະຕິບັດນະໂຍບາຍຕໍ່ຕ້ານການການສໍ້ລາດບັງຫຼວງ.

### 1.5. ຄວາມຮັບຜິດຊອບ

ຄະນະບໍລິຫານງານ ມີໜ້າທີ່ຮັບຜິດຊອບໂດຍລວມ ໃນການຊີ້ນໍາໃຫ້ສອດຄ່ອງກັບນະໂຍບາຍຕໍ່ຕ້ານການສໍ້ລາດບັງຫຼວງ. ໂດຍສະເພາະ, ທ່ານປະທານ ຈະເປັນຜູ້ຮັບຜິດຊອບການກວດສອບ/ຕິດຕາມ ການຈັດຕັ້ງປະຕິບັດໂດຍລວມຂອງນະໂຍບາຍຕໍ່ຕ້ານການສໍ້ລາດບັງຫຼວງຂອງກອງເລຂາ. ເຊັ່ນດຽວກັນ, ຫົວໜ້າອໍານວຍການ ທີ່ເປັນຄູ່ຮ່ວມງານຂອງ AIPP ກໍ່ມີຄວາມຮັບຜິດຊອບໃນການກວດສອບການຈັດຕັ້ງປະຕິບັດນະໂຍບາຍຕໍ່ຕ້ານການສໍ້ລາດບັງຫຼວງຢູ່ໃນອົງກອນຂອງຕົນ.

### 1.6. ການສື່ສານ ແລະ ການປະຖົມນິເທດ

ນະໂຍບາຍຕໍ່ຕ້ານການສໍ້ລາດບັງຫຼວງ ຈະມີການສື່ສານ/ສົ່ງໄປຍັງສະມາຊິກ, ຄູ່ຮ່ວມງານ ແລະ ພະນັກງານທັງໝົດຂອງ AIPP ເພື່ອປະຕິບັດໃຫ້ສອດຄ່ອງກັບນະໂຍບາຍສະບັບນີ້. ຕໍ່ກັບສະມາຊິກ ແລະ ຄູ່ຮ່ວມງານຂອງ AIPP, ຖ້າມີຄວາມຈໍາເປັນຈະຕ້ອງໄດ້ແປນະໂຍບາຍສະບັບນີ້ຈາກພາສາອັງກິດ ເປັນພາສາຂອງປະເທດນັ້ນ. ການປະຖົມນິເທດນະໂຍບາຍຕໍ່ຕ້ານການສໍ້ລາດບັງຫຼວງ ໃຫ້ແກ່ພະນັກງານ, ສະມາຊິກ ແລະ ຄູ່ຮ່ວມງານ ຈະໄດ້ຈັດຂຶ້ນໃນວລາມີການປະຊຸມຮ່ວມກັບຄູ່ຮ່ວມງານ ແລະ ກອງປະຊຸມຂອງຄະນະກໍາມະການໂຄງການ. ນະໂຍບາຍຕໍ່ຕ້ານການສໍ້ລາດບັງຫຼວງສາມາດເບິ່ງໄດ້ຢູ່ໃນເວັບໄຊ້ຂອງ AIPP ແລະ ນະໂຍບາຍຕໍ່ຕ້ານການສໍ້ລາດບັງຫຼວງຈະໄດ້ຈັດພິມພ້ອມກັບບົດລາຍງານປະຈໍາປີ.

### 1.7. ການຈັດຕັ້ງປະຕິບັດນະໂຍບາຍ ການຕໍ່ຕ້ານການສໍ້ລາດບັງຫຼວງ

ຮູບ: ວົງຈອນການຈັດຕັ້ງປະຕິບັດນະໂຍບາຍຕໍ່ຕ້ານການສໍ້ລາດບັງຫຼວງຢູ່ໃນ AIPP



1.7.1. ປ່ອງບໍລິການ ການຮ້ອງທຸກ

ຖ້າຫາກມີການສົງໄສວ່າ ມີການສໍ້ໂກງທາງດ້ານເສດຖະກິດ, ມີການໃຫ້ສິນບົນ ແລະ ມີການສໍ້ລາດບັງຫຼວງ ໃຫ້ຮີບລາຍງານຫາທ່ານປະທານຄະນະກຳມະການທີ່ປຶກສາຂອງ AIPP ໂດຍກົງ ຜ່ານຊ່ອງທາງທີ່ເປັນຄວາມລັບ ສ້າງຂຶ້ນໂດຍ AIPP. ຜູ້ທີ່ແຈ້ງຂໍ້ມູນຈະໄດ້ຮັບການເຄົາລົບ ແລະ ປົກປ້ອງຢ່າງປອດໄພ.

ເພື່ອຈຸດປະສົງດັ່ງກ່າວ, ການສື່ສານດັ່ງລຸ່ມນີ້ແມ່ນວິທີການລາຍງານຄວາມລັບທີ່ຈະໄດ້ຮັບການສ້າງຕັ້ງຂຶ້ນ:

- ສາຍດ່ວນ ສຳລັບລາຍງານຄວາມລັບຂອງການສໍ້ລາດບັງຫຼວງ ແລະ ທີ່ຢູ່ອີເມວ ຈະຖືກຄຸ້ມຄອງໂດຍທ່ານປະທານຄະນະກຳມະການທີ່ປຶກສາຂອງ **AIPP**, ການກະທຳທີ່ມີລັກສະນະສໍ້ລາດບັງຫຼວງ ແລະ ຂໍ້ມູນທີ່ກ່ຽວຂ້ອງກັບການກ່າວຫານັ້ນ ຈະຖືກລາຍງານໄປຫາທ່ານປະທານຄະນະກຳມະການທີ່ປຶກສາຂອງ **AIPP** ຕາມຊ່ອງທາງດັ່ງກ່າວ. ຫຼັງຈາກນັ້ນ ລາວຈະຈັດກອງປະຊຸມຮ່ວມກັບບັນດາສະມາຊິກ **2-3** ທ່ານ ເພື່ອປຶກສາຫາລື ກ່ຽວກັບຂະບວນການຕ່າງໆ. ສຳລັບນໍ້າເບີໂທລະສັບ ແລະ ທີ່ຢູ່ອີເມວ ຈະເອົາບັນດາທ່ານສະມາຊິກທີ່ເປັນກອງເລຂາໝົດທຸກຄົນເພື່ອສະດວກໃນການສື່ສານກັບຄູ່ຮ່ວມງານ ແລະ ຍັງຈະໄດ້ຈັດພິມຮ່ວມກັບບົດລາຍງານປະຈຳປີ, ເວບໄຊ໌ຂອງ **AIPP** ແລະ ອື່ນໆ. ມາດຕະການພິເສດຈະໄດ້ຮັບການສ້າງຕັ້ງຂຶ້ນ ເພື່ອຮັບປະກັນວ່າ ການດຳເນີນການທຸກຢ່າງໃນຊ່ອງທາງນີ້ມີຄວາມປອດໄພ.

- ຮູບແບບການຮ້ອງທຸກແບບງ່າຍໆຈະໄດ້ຮັບການພັດທະນາຮ່ວມກັບບັນດາສະມາຊິກ ແລະ ຄູ່ຮ່ວມງານ ແລະ ຍັງຈະໄດ້ເອົາລົງໃນເວັບໄຊ໌ຂອງ **AIPP** ອີກດ້ວຍ. ຈະສະໜັບສະໜູນໃຫ້ນຳໃຊ້ຮູບແບບຂອງການຮ້ອງທຸກເພື່ອເກັບກຳຂໍ້ມູນທີ່ຈຳເປັນ, ຮູບແບບທີ່ສະໜອງໃຫ້ນັ້ນຈະໄດ້ນຳໃຊ້ເຂົ້າໄປຊ່ວຍໃນການສືບສວນ-ສອບສວນຂອງ **AIPP** ເພື່ອເຮັດໜ້າທີ່ປ້ອງກັນບໍ່ໃຫ້ເກີດມີອຸປະສັກ (ເພື່ອຮັບປະກັນວ່າ ພວກເຂົາມີຂໍ້ມູນພຽງພໍທີ່ຈະດຳເນີນການສືບສວນຂອງເຂົາເຈົ້າ). ຄະນະກຳມະການສືບສວນ-ສອບສວນ (CI) ອາດຈະໄດ້ຂໍ້ມູນເພີ່ມເຕີມໃນຂະນະສືບສວນ-ສອບສວນ.

**ຊ່ອງທາງການຮ້ອງທຸກ:**

**ທີ່ຢູ່ອີເມວ:** chupinit@gmail.com

**ນໍ້າເບີໂທລະສັບມືຖື:** + 66896813536

1.7.2. ຄະນະກຳມະການສືບສວນ-ສອບສວນ (IC)

ເມື່ອໄດ້ຮັບຄຳຮ້ອງທຸກ ກ່ຽວກັບ ຂໍ້ກ່າວຫາການສໍ້ລາດບັງຫຼວງ ຫຼື ມີຂໍ້ສົງໄສທີ່ມີການກະທຳໃນລັກສະນະສໍ້ລາດບັງຫຼວງ, ທ່ານປະທານຄະນະກຳມະການທີ່ປຶກສາຂອງ **AIPP** ຈະຕ້ອງໄດ້ຈັດກອງປະຊຸມ ແລະ ເຊີນບັນດາສະມາຊິກຄະນະກຳມະການ **(**ຢ່າງໜ້ອຍ **03** ທ່ານ**)** ເພື່ອປຶກສາຫາລື ແລະ ປະເມີນຂໍ້ກ່າວຫາດັ່ງກ່າວ. ຖ້າຫາກວ່າຄະນະກຳມະການເຫັນວ່າ ການຮ້ອງທຸກນັ້ນຖືກຕ້ອງຕາມກົດໝາຍ ແລະ ມີມູນຄວາມຈິງ, ຄະນະກຳມະການສືບສວນ-ສອບສວນຈະໄດ້ຮັບການສ້າງຕັ້ງຂຶ້ນ ແລະ ຄະນະດັ່ງກ່າວຈະຖືກສ້າງຕັ້ງຂຶ້ນພາຍໃນ **02** ອາທິດຫຼັງຈາກໄດ້ຮັບການລາຍງານ.

**ອົງປະກອບຂອງຄະນະກຳມະການສືບສວນ-ສອບສວນ (IC)**

ອົງປະກອບຂອງຄະນະກຳມະການສືບສວນ-ສອບສວນ ມີທ່ານປະທານຄະນະກຳມະການທີ່ປຶກສາຂອງ AIPP ເປັນຫົວໜ້າຄະນະ ຊຶ່ງມີລາຍລະອຽດດັ່ງນີ້:

- ສະມາຊິກຄະນະກຳມະການ 03 ທ່ານ
- ຢ່າງໜ້ອຍມີ 02 ທ່ານ ທີ່ເປັນບຸກຄົນຊື່ສັດ ແລະ ເຊື່ອຖືໄດ້ ມາຈາກຫຼາຍພາກສ່ວນ
- ທະນາຍຄວາມ 01 ທ່ານ (ແນະນຳໂດຍຄະນະກຳມະການ ແລະ ມີຄວາມຮູ້ ແລະ ເຂົ້າໃຈກົດໝາຍຢ່າງເລິກເຊິ່ງ).

1.7.3. ຄະນະກຳມະການລົງໂທດ (SC)

ຄະນະກຳມະການລົງໂທດ (SC) ຈະຖືກສ້າງຕັ້ງຂຶ້ນໂດຍມີຈຳນວນສະມາຊິກບໍ່ເກີນ 05 ທ່ານ, ຊຶ່ງຄັດເລືອກມາຈາກສະມາຊິກຄະນະກຳມະການບໍລິຫານ (EC) ແລະ ຄະນະກຳມະການທີ່ປຶກສາຂອງ AIPP ຈະເປັນຜູ້ຄັດເລືອກ. ທ່ານປະທານຂອງຄະນະບໍລິຫານຈະເປັນຫົວໜ້າຂອງຄະນະກຳມະການລົງໂທດຮ່ວມກັບບຸກຄົນທີ່ຢູ່ໃນຄະນະກຳມະການທີ່ປຶກສາ ແລະ ສະມາຊິກທີ່ມາຈາກຄະນະກຳມະການບໍລິຫານ 03 ທ່ານ. ຄະນະກຳມະການລົງໂທດ ຈະທົບທວນຜົນຂອງການສືບສວນ-ສອບສວນຄືນຢ່າງລະອຽດ ແລະ ຕັດສິນໃຈລົງໂທດຕໍ່ຜູ້ກະທຳຜິດຕາມຄວາມເໝາະສົມ.

ອີງໃສ່ ການສືບສວນ-ສອບສວນ ແລະ ການລົງໂທດ, ຄະນະກຳມະການບໍລິຫານ (EC) ຈະໃຊ້ເວລາດຳເນີນການຕໍ່ບຸກຄົນ, ພະນັກງານ ແລະ ນິຕິບຸກຄົນ ທີ່ສໍ້ລາດບັງຫຼວງ. ຄະນະກຳມະການບໍລິຫານ ຍັງສາມາດສົ່ງເລື່ອງດັ່ງກ່າວໄປຫາທ່ານເລຂາທິການ ເພື່ອດຳເນີນການບາງສິ່ງທີ່ຈຳເປັນພາຍໃນກອງເລຂາ ໃນຂະນະ ທີ່ຄະນະກຳມະການບໍລິຫານຈະຕັດສິນໃຈ ແລະ ດຳເນີນການກັບເລື່ອງທີ່ກ່ຽວຂ້ອງກັບສະມາຊິກ ແລະ ຄູ່ຮ່ວມງານຂອງ AIPP ໂດຍມີການປຶກສາຫາລືກັບທ່ານເລຂາທິການ ແລະ ຄະນະກຳມະການໂຄງການ, ຖ້າຫາກມີຄວາມຈຳເປັນ.

ເກືອບທຸກໆກໍລະນີ, ຄະນະກໍາມະການບໍລິຫານ ແລະ ຄະນະກໍາມະການທີ່ປຶກສາຂອງ AIPP ຈະເປັນຜູ້ຈັດການກັບເລື່ອງການສໍ້ລາດບັງຫຼວງພາຍໃນ ໂດຍມີການປຶກສາຫາລືກັບຢ່າງໃກ້ສິດກັບທ່ານເລຂາທິການ ແລະ ກອງເລຂາ, ໃນກໍລະນີ ເລື່ອງດັ່ງກ່າວເປັນເລື່ອງທີ່ຮ້າຍແຮງ ຊຶ່ງມີຄວາມຈໍາເປັນຕ້ອງດໍາເນີນຕາມຂະບວນການຍຸຕິທໍາເຊັ່ນ ສານ, ຈະຕ້ອງໄດ້ວ່າຈ້າງທະນາຍຄວາມທີ່ໜ້າເຊື່ອຖືໄດ້ ເພື່ອສະໜັບສະໜູນຂໍ້ມູນດ້ານນິຕິກໍາເພີ່ມເຕີມຕາມຄວາມຕ້ອງການ.

## 1.8. ຜົນກະທົບຂອງການລະເມີດ

ທຸກຮູບແບບຂອງການສໍ້ລາດບັງຫຼວງ ຈະຕ້ອງມີການສືບສວນ-ສອບສວນ ແລະ ຈະມີການດໍາເນີນຄະດີຢ່າງສົມເຫດ-ສົມຜົນກັບຜູ້ທີ່ພົບເຫັນວ່າມີຄວາມຜິດ. AIPP ຈະປະຕິບັດຕາມຂັ້ນຕອນຂອງຂະບວນການຍຸຕິທໍາຈົນກວ່າຈະພິສູດໄດ້ວ່າມີຄວາມຜິດຈິງ. ໃນກໍລະນີ ທີ່ພົບເຫັນພະນັກງານຂອງ AIPP, ມີຄວາມຜິດທີ່ກ່ຽວຂ້ອງກັບການສໍ້ລາດບັງຫຼວງທີ່ໄດ້ລະບຸຂ້າງເທິງນັ້ນ AIPP ຈະໄດ້ແຈ້ງການ ແລະ ປະກາດໃຫ້ທຸກພາກສ່ວນຮັບຮູ້ ເຊັ່ນ ພະນັກງານ, ສະມາຊິກ ແລະ ຄູ່ຮ່ວມງານ ເພື່ອປ້ອງກັນບໍ່ໃຫ້ເລື່ອງດັ່ງກ່າວ ເກີດຂຶ້ນອີກຢູ່ໃນຂອບເຂດຄວາມຮັບຜິດຊອບຂອງ AIPP.

## 1.9. ການສື່ສານດ້ວຍການລາຍງານ

ເຫດການທັງໝົດຂອງການສໍ້ລາດບັງຫຼວງ ຫຼື ການກະທໍາທີ່ສົງໄສວ່າມີການສໍ້ລາດບັງຫຼວງ ຈະຖືກບັນທຶກເປັນບົດລາຍງານ ໃນນັ້ນໃຫ້ລະບຸຄວາມຮຸນແຮງ ແລະ ຂອບເຂດຂອງບັນຫາ ພ້ອມວິທີການດໍາເນີນໃນຂັ້ນຕໍ່ໄປ, ຫຼັງຈາກນັ້ນ ສົ່ງບົດລາຍງານໄປຍັງຄະນະກໍາມະການບໍລິຫານ ແລະ ຄະນະກໍາມະການທີ່ປຶກສາຂອງ AIPP.

## 1.10. ຄວາມລັບ

AIPP ຈະຮັກສາຄວາມລັບ ແລະ ຂໍ້ມູນທັງໝົດໄວ້ໃຫ້ດີທີ່ສຸດ ລວມທັງປົກປ້ອງສິດຜົນປະໂຫຍດຂອງບຸກຄົນທີ່ໄດ້ຮ້ອງທຸກ ຫຼື ລາຍງານໃຫ້ນັ້ນ ເພື່ອບໍ່ໃຫ້ມີຄວາມກັງວົນວ່າ ຕົນຈະໄດ້ຮັບການທໍາຮ້າຍຈາກຜູ້ທີ່ກະທໍາຜິດ.

AIPP ໃຫ້ຄໍາໝັ້ນສັນຍາວ່າ ຈະປົກປ້ອງບຸກຄົນທີ່ຈົງຮັກພັກດີ ທີ່ລາຍງານຂໍ້ມູນກ່ຽວກັບການສໍ້ໂກງ ແລະ ການສໍ້ລາດບັງຫຼວງ ຫຼື ຜູ້ທີ່ໃຫ້ການຮ່ວມມືໃນຂັ້ນຕອນການສືບສວນ-ສອບສວນ.

ຢ່າງໃດກໍ່ຕາມ, ຖ້າຫາກວ່າ AIPP ຕັດສິນໃຈວ່າ ຂໍ້ມູນທີ່ໄດ້ມາເປັນການກະທໍາທີ່ມີຈຸດປະສົງເພື່ອທໍາລາຍ ຫຼື ມີເຈດຕະນາກະທໍາຜິດ, AIPP ຈະໃຊ້ວິທີການທີ່ເໝາະສົມເພື່ອໄຕ່ຕອງຢ່າງລະອຽດ.

ມີຫຍັງແດ່ທີ່ຄິດວ່າຄວນຈະລາຍງານໃຫ້ AIPP?

AIPP ເປັນຜູ້ສືບສວນ-ສອບສວນຂໍ້ກ່າວຫາການສໍ້ໂກງ ແລະ ການສໍ້ລາດບັງຫຼວງ ທີ່ກ່ຽວຂ້ອງກັບການດຳເນີນງານຂອງກອງເລຂາຂອງ AIPP ແລະ ການຈັດຕັ້ງປະຕິບັດໂຄງການ ແລະ ກິດຈະກຳຂອງໂຄງການ.

***ສິ່ງທີ່ຄວນຈະລາຍງານໃຫ້ AIPP ລວມມີ:***

- ພະນັກງານ AIPP ໃຫ້ສິນບົນ ແລະ ຂອງຂວັນໃຫ້ແກ່ເຈົ້າໜ້າທີ່ລັດ ອັນບໍ່ຊອບທຳ ຜິດຕໍ່ກົດໝາຍຂອງປະເທດນັ້ນໆ;
- ການສໍ້ໂກງ ແລະ ການສໍ້ລາດບັງຫຼວງ ໂດຍພະນັກງານ, ສະມາຊິກ ແລະ ຄູ່ຮ່ວມງານ ຫຼື ບຸກຄົນທີ່ການຈັດຕັ້ງບັດກິດຈະກຳຂອງໂຄງການຮ່ວມກັບ AIPP;
- ການກະທຳທີ່ສົງໄສວ່າ ມີການເຮັດສັນຍາທີ່ລະເມີດຕໍ່ລະບຽບການຈັດຊື້ຂອງ AIPP;
- ການໃຫ້ໂດຍບໍ່ຊອບທຳ, ການໃຫ້ສິນບົນ ຫຼື ເງິນຄ່າທົດແທນສຳລັບຈຸດປະສົງເຊັ່ນວ່າ ອິດທິພົນໃນສັນຍາ;
- ຜົນປະໂຫຍດສ່ວນຕົວ ແລະ ການອ້າງສິດຕໍ່ການຕັດສິນໃນສັນຍາ;
- ການໃຫ້ທີ່ບໍ່ເໝາະສົມ ແລະ ການຮັບຂອງຂວັນ ເພື່ອຕອບແທນບຸນຄຸນຂອງບຸກຄົນໃດໜຶ່ງ.

ພະນັກງານ, ສະມາຊິກ ແລະ ຄູ່ຮ່ວມງານຂອງ AIPP ທຸກຄົນຈະຕ້ອງໄດ້ລາຍງານຜ່ານສາຍດ່ວນ ຫຼື ທີ່ຢູ່ອີເມວທີ່ຈັດໃຫ້ ຖ້າຫາກພົບເຫັນກໍລະນີທີ່ກ່ຽວຂ້ອງກັບການສໍ້ໂກງ ແລະ ການສໍ້ລາດບັງຫຼວງ.